เລື່ອງໂປໂລ ເຫຼັ້ມທີສາມ

**ບົດເສັງສຸດທ້າຍ** ຊື່______________

1 ໂປໂລຕັ້ງຕົ້ນອອກໄປປະກາດພະທຳເທື່ອທີ 3 ໂດຍໄປເມືອງເອເຟໂຊກ່ອນ. ເພິ່ນພົບຄົນທີ່ເຊື່ອມາຮ່ວມກັນ ປະມານ 12 ຄົນ ແຕ່ເຂົາຂາດບໍ່ມີຄວາມຮູ້ເລື່ອງຂ່າວປະເສີດ.

ກ. ເຂົາຮູ້ແຕ່ເລື່ອງບັບຕິດສະມາຂອງໃຜ? ____________________

ຂ. ໂປໂລໃຫ້ເຂົາຮັບບັບຕິດສະມາໃນນາມຂອງພະເຢຊູແລ້ວເຂົາໄດ້ຮັບອີ່ງໃດ?

____________________

2 ມີຜູ້ນຳຄຼິດສະຕຽນຈາກທະວີບອາຟຼິກກາມາເຖິງເມືອງເອເຟໂຊກ່ອນໂປໂລ ຊຶ່ງຮູ້ແຕ່ເລື່ອງບັບຕິດສະມາຂອງໂຢຮັນ ບັບຕິດສະໂຕ.

ກ. ເພິ່ນຊື່ຫຍັງ? ____________________

ຂ. ສອງຄົນໃດມາອະທິບາຍໃຫ້ອາໂປໂລຮູ້ທາງຂອງພະເຈົ້າຢ່າງຖືກຕ້ອງ? ____________

____________________

ຄ. ອາໂປໂລໄປປະກາດພະທຳໃນໂກລິນໂທດ້ວຍ ແລ້ວຕໍ່ໄປເກີດມີບັນຫາໃດໃນຄຼິດສະຕະຈັກນັ້ນ? ____________________

3 ເຊັ່ນເດີມ ໂປໂລໄປປະກາດພະທຳໃນໂຮງທຳໃນເມືອງເອເຟໂຊຈົນຄົນຢິວທີ່ບໍ່ເຊື່ອໄລ່ເພິ່ນອອກ. ໂປໂລປະກາດໃນຫ້ອງປະຊຸມຂອງໃຜ? ____________________

4 ໃນເມືອງເອເຟໂຊ ໂປໂລຫາລ້ຽງຊີວິດດ້ວຍອາຊີບຢ່າງໃດ? ____________________

5 ກ. ຜູ້ຮັບເຊື່ອໃໝ່ຄົນໃດ ກັບໄປບ້ານເລີຍເປີດປະຊຸມນະມັດສະການໃນເຮືອນຂອງຕົນ? ____________________

ຂ. ເພິ່ນຢູ່ເມືອງໃດ? ____________________

ຄ. ໂປໂລໃຊ້ຜູ້ປະກາດພະທຳຄົນໃດ ໄປຊ່ວຍຄຼິດສະຕະຈັກໃໝ່ນັ້ນ? ____________

ງ. ໂປໂລຝາກຈົດໝາຍສອງສະບັບໄປເຖິງເມືອງນັ້ນ ສະບັບໃດຝາກໄປເຖິງຄຼິດສະຕະຈັກ? ____________________

ຈ. ສະບັບໃດ ຝາກໄປເຖິງບຸກຄົນໜຶ່ງໃນເມືອງນັ້ນ? ____________________

ສ. ຂຽນໄປຫາຟີເລໂມນເລື່ອງໃຜ? ____________________

ຊ. ມີຄຼິດສະຕະຈັກທີ່ຕັ້ງໄວ້ໃນແຂວງອາເຊຍອີກສອງເມືອງໃດ ໃນຍຸກນັ້ນ? ____________

____________________

ຍ. ໃນສອງຄຼິດສະຕະຈັກນັ້ນ ໂປໂລຂຽນຈົດ າຍເຖິງຄຼິດສະຕະຈັກໃດ ທີ່ຫາຍໄປແລ້ວ?

____________________

6 ກ. ຄົນຢິວຄົນໃດ ທີ່ມີລູກຊາຍ 7 ຄົນ ພະຍາຍາມໄລ່ຜີອອກຕາມແບບຂອງໂປໂລ? _____

ຂ. ຜີເຮັດຫຍັງໃສ່ໝໍຜີນັ້ນ? ____________________

ຄ. ເຫັນແລ້ວຄຼິດສະຕຽນມີໃຈຮ້ອນຮົນແທ້ ຈົນກ່ວາເຂົາເຮັດຫຍັງ?

____________________

7 ໂປໂລຂຽນຈົດໝາຍ 4 ສະບັບ ເຖິງຄຼິດສະຕະຈັກໂກລິນໂທ ຄືຈົດໝາຍກ່ອນ ແລະຈົດໝາຍລະຫວ່າງກາງ ທີ່ຫາຍໄປແລ້ວ ແລະອີກ 1 ກລທ ແລະ 2 ກລທ ທີ່ເຮົາຍັງມີຢູ່.

ກ. ໃນຈົດໝາຍເຖິງໂກລົນໂທທັງ 4 ສະບັບນັ້ນ ໂປໂລ ຂຽນສະບັບໃດແດ່ ຈາກເອເຟໂຊ?

____________________________________________

ຂ. ຂຽນສະບັບໃດຈາກມາເກໂດເນຍ ຫຼັງຈາກອອກຈາກເອເຟໂຊ? ____________

ຄ. ແມ່ນໃຜຖືສະບັບຫວ່າງກາງໄປ? ____________________________

8 ເບິ່ງຄືວ່າໂປໂລຮີບດ່ວນໄປໂກລົນໂທໃນຄາວນັ້ນ.

ກ. ເລື່ອງນີ້ເຫັນໃນພະທຳກິດຈະການ ຫຼືໃນຈົດໝາຍຂອງໂປໂລ? ____________

ຂ. ເມື່ອໄປນັ້ນ ມີໃຈຢ່າງໃດ? (ໃຫ້ເລືອກ)

____ ຍິນດີ. ____ ຊະນະ. ____ ທຸກໂສກ. ____ ສັ່ງສອນ.

9 ມີບັນຫາຫຼາຍຢ່າງໃນຄຼິດສະຕະຈັກໂກລົນໂທ. ໃຫ້ທ່ານສະເໜີຢ່າງໜ້ອຍສອງບັນຫາ ແລະ ຈົດບົດທີ່ ໂປໂລ ຍົກເລື່ອງບັນຫານັ້ນ.

ກ. ບັນຫາ ____________________________________

ໃນບົດ ____________________________________

ຂ. ບັນຫາ ____________________________________

ໃນບົດ ____________________________________

10 ໂປໂລຍົກເລື່ອງບັນຫາໃດໃນໂກໂລຊາຍ.

ກ. ບັນຫາ ____________________________________

ໃນບົດ, ຂໍ້ ____________________________________

ຂ. ບັນຫາ ____________________________________

ໃນບົດ, ຂໍ້ ____________________________________

11 ມີຄາວໜຶ່ງທີ່ໂປໂລພົບຄວາມທຸກລຳບາກຈົນໝົດຫວັງທີ່ຈະເອົາຊີວິດໃຫ້ພົ້ນ. ເພິ່ນກ່າວເລື່ອງນີ້ໃນຈົດໝາຍສອງສະບັບ. ໃຫ້ທ່ານບອກຢ່າງນ້ອຍສະບັບໜຶ່ງ? ____________

12 ກ. ຜູ້ທີ່ສ້າງໃຫ້ມີຄວາມວຸ້ນວາຍໃນເມືອງເອເຟໂຊຊື່ຫຍັງ? ______________

ຂ. ເພິ່ນມີອາຊີບໃດ? ____________________________

ຄ. ໂປໂລໜີຈາກເອເຟໂຊໄປລໍຖ້າວ່າຈະພົບຕີໂຕໃນເມືອງໃດ? ____________

ງ. ແຕ່ບໍ່ພົບເທື່ອ ຜົນສຸດທ້າຍໂປໂລພົບຕີໂຕໃນແຂວງໃດ? ____________

ຈ. ຕີໂຕເດີນທາງມາຈາກເມືອງໃດ ຈຶ່ງພົບໂປໂລ? ______________

ສ. ເອົາຂ່າວດີ ຫຼືຂ່າວບໍ່ດີມາ? ________________________

13 ກ. ເຫັນວ່າລູກາພ້ອມກັບພີ່ນ້ອງໃນຟີລິບປອຍຊ່ວຍໂປໂລ ແລ້ວເພິ່ນສາມາດໄປປະກາດພະທຳໃນແຂວງໃໝ່ ຄືແຂວງໃດ? ______________________

ຂ. ໂປໂລຂຽນຈົດໝາຍໃດຈາກແຂວງມາເກໂດເນຍ? ______________

ຄ. ຝາກໄວ້ກັບໃຜ? ____________________________

14 ກ. ຈາກມາເກໂດເນຍແລ້ວ ໂປໂລໄປເມືອງໃດ? ____________________

ຂ. ຂຽນພະທຳໃດໃນເມືອງນັ້ນ? ________________________

ຄ. ໃນພະທຳນັ້ນ ເຫັນວ່າໂປໂລມີແຜນການຈະກັບໄປເຢລູຊາເລັມກ່ອນ ແລ້ວຈະປ່າວປະກາດຂ່າວປະເສີດໃນ ປະເທດໃດ? ______________________________

ງ. ຫວັງວ່າຄຼິດສະຕະຈັກໃດຈະຊ່ວຍໃນການນັ້ນ? ______________________________

ຈ. ເລື່ອງນັ້ນເຫັນໃນພະທຳໂລມບົດໃດຂໍ້ໃດ? ______________________________

15 ແທນທີ່ຈະເດີນທາງໄປກຸງເຢລູຊາເລັມໂດຍກົງ ເພິ່ນຜ່ານແຂວງມາເກໂດເນຍກ່ອນ. ມີຫຼາຍຄົນໄປນຳ. ເຂົາມີ ຈຸດປະສົງໃດ ຈະໄປກຸງເຢລູຊາເລັມ? ______________________________

16 ເມື່ອເຂົາຜ່ານໂທອາດໄປ ໂປໂລເຮັດການອັດສະຈັນໃດ? ______________________________

______________________________

17 ໂປໂລບໍ່ໄດ້ເຂົ້າເມືອງເອເຟໂຊ ແຕ່ພວກຜູ້ນຳຄຼິດສະຕະຈັກເອເຟໂຊມາພົບໂປໂລຢູ່ທ່າເຮືອເມືອງໃດ? ______________________________

18 ກ. ແມ່ນໃຜທີ່ທຳນວາຍບໍ່ໃຫ້ໂປໂລໄປກຸງເຢລູຊາເລັມ? ______________________________

ຂ. ໃນເມືອງໃດ? ______________________________

19 ກ. ເປັນຫຍັງໂປໂລຕັ້ງໃຈວ່າຈະໄປກຸງເຢລູຊາເລັມເທື່ອນີ້? ______________________________

ຂ. ໄປເຖິງແລ້ວພີ່ນ້ອງຄຼິດສະຕຽນຊາດຍິວຊັກຊວນໃຫ້ໂປໂລເຮັດພິທີໃດ? ______________________________

ຄ. ພີ່ນ້ອງຄຼິດສະຕຽນຍິວຫວັງວ່າຄົນຍິວທົ່ວໄປຈະຕ້ອນຮັບໂປໂລດີ ໆ. ແຕ່ແທນທີ່ຈະຕ້ອນຮັບໂປໂລ ເຂົາເກືອບ ຈະເຮັດຫຍັງ? ______________________________

20 ກ. ຄົນຍິວໃນກຸງເຢລູຊາເລັມ ມີແຜນການຈະຂ້າໂປໂລ ແຕ່ວ່າທະຫານໂລມນຳໂປໂລໄປໃສກ່ອນ? ______________________________

ຂ. ເຂົາຂັງໄວ້ໃນເມືອງນັ້ນເທິງປານໃດ? ______________________________

ຄ. ຜູ້ນຳໃນຄຼິດສະຕະຈັກນັ້ນຄືໃຜ? ______________________________

ງ. ໃນເມືອງນັ້ນ ໂປໂລມີໂອກາດກ່າວຄຳພະຍານຕໍ່ໜ້າເຈົ້າໜ້າທີ່ສູງສາມຄົນໃດ? ______________________________

______________________________

ຈ. ໂປໂລເຮັດຢ່າງໃດ ຈຶ່ງຈະອອກຈາກເມືອງນີ້? ______________________________

ສ. ເຂົາເອົາໂປໂລໄປໃສ? ______________________________

21 ກ. ເຂົາເດີນທາງ ໆເຮືອຈົນເຖິງເກາະໃດ ທີ່ໂປໂລປຶກສາກັບເຂົາໃຫ້ພັກຈົນຮອດລະດູໜາວຜ່ານໄປ? ______________________________

ຂ. ແຕ່ເຂົາບໍ່ຟັງຄວາມຂອງໂປໂລ ຈຶ່ງເກີດອຸບັດຕິເຫດຢ່າງໃດ? ______________________________

ຄ. ຫຼັງຈາກນັ້ນ ຄົນໃດ ມາປະກາດຂ່າວປະເສີດໃນເກາະນັ້ນຕໍ່? ______________________________

ງ. ສຸດທ້າຍ ເຂົາຂຶ້ນບົກຢູ່ເກາະໃດ? ______________________________

ຈ. ສອງຄົນໃດທີ່ເປັນໝູ່ເດີນທາງໄປກັບໂປໂລໃນເວລານັ້ນ? ______________________________

22 ໂປໂລເປັນຕົວຢ່າງທີ່ດີຕໍ່ໜ້າຄົນທີ່ເດີນທາງໄປນຳໃນຫຼາຍດ້ານ. ໃຫ້ທ່ານຈົດຢ່າງນ້ອຍ 3 ດ້ານ.

ກ. ______________________________

ຂ. ______________________________

ຄ. ______________________________

23 ກ. ເທື່ອທຳອິດທີ່ໂປໂລຢູ່ໃນກຸງໂລມ ເພິ່ນຖືກຂັງໄວ້ແບບໃດ? ____________________

ຂ. ໃນຍຸກທຳອິດນັ້ນ ໂປໂລຂຽນຈົດໝາຍ 4 ສະບັບ. ໃຫ້ທ່ານຈົດມາຢ່າງນ້ອຍ 2 ສະບັບ.

______________________________________________________________

24 ກ. ຫຼັງຈາກຄາວທີ່ຖືກປ່ອຍ ໂປໂລໄປຢ້ຽມຫຼາຍຄຼິດສະຕະຈັກ. ໃຫ້ທ່ານຈົດຊື່ມາຢ່າງນ້ອຍ 1 ຄຼິດສະຕະຈັກນັ້ນ. ____________________________________________

ຂ. ຂຽນຈົດໝາຍສອງສະບັບໃດໃນຄາວນັ້ນ? ______________________________

25 ຕໍ່ມາໂປໂລຖືກຂັງໄວ້ອີກ.

ກ. ເທື່ອສຸດທ້າຍຖືກຂັງໄວ້ໃນສະພາບໃດ? ______________________________

ຂ. ຂຽນຈົດໝາຍສະບັບໃດ ໃນເວລາກ່ອນຈະຕາຍນີ້? ________________________

ຄ. ຖືກປະຫານຊີວິດແບບໃດ? __________________________________________

ງ. ໃຫ້ທ່ານຍົກຂໍ້ພະຄຳພີທີ່ສະແດງຢ່າງແຈ່ມແຈ້ງວ່າ ໂປໂລບໍ່ຢ້ານຕາຍ! ____________